ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 310 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 09 ເມສາ 2026

# ຂໍ້ຕົກລົງ
# ວ່າດ້ວຍການສະໜອງສິນເຊື່ອຮ່ວມ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງທະນາຄານທຸລະກິດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການສະໜອງສິນເຊື່ອຮ່ວມ ລະຫວ່າງທະນາຄານທຸລະກິດດ້ວຍກັນ ຫຼື ທະນາຄານທຸລະກິດ ກັບສະຖາບັນການເງິນອື່ນ ເພື່ອກະຈາຍຄວາມສ່ຽງໃນການສະໜອງສິນເຊື່ອ ແນໃສ່ຊຸກຍູ້ການສະໜອງແຫຼ່ງທຶນຕາມຄວາມຕ້ອງການຂອງລູກຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 ການສະໜອງສິນເຊື່ອຮ່ວມ**

ການສະໜອງສິນເຊື່ອຮ່ວມ (Syndicated Credit) ແມ່ນ ການເຂົ້າຮ່ວມສະໜອງສິນເຊື່ອ ລະຫວ່າງທະນາຄານທຸລະກິດດ້ວຍກັນ ຫຼື ທະນາຄານທຸລະກິດ ກັບສະຖາບັນການເງິນອື່ນ ແຕ່ສອງແຫ່ງຂຶ້ນໄປ ເພື່ອສະໜອງສິນເຊື່ອໃຫ້ລູກຄ້າ ຕາມອັດຕາສ່ວນທີ່ໄດ້ຕົກລົງກັນ ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນເຊື່ອ** ໝາຍເຖິງ ເງິນກູ້ ແລະ ພາລະຜູກພັນທາງການເງິນ;

2. **ເງິນກູ້** ໝາຍເຖິງ ເງິນທີ່ຜູ້ສະໜອງສິນເຊື່ອ ໃຫ້ກູ້ຢືມໃນຮູບແບບຕ່າງໆ ເຊັ່ນ ເງິນກູ້ທົ່ວໄປ, ເງິນເບີກເກີນບັນຊີ, ເງິນຈ່າຍລ່ວງໜ້າ ແລະ ເງິນກູ້ປະເພດອື່ນ ຕາມການກຳນົດຂອງ ທຫລ;

3. **ພາລະຜູກພັນທາງການເງິນ** ໝາຍເຖິງ ຂໍ້ຜູກພັນໃນສັນຍາ ທີ່ຜູ້ສະໜອງສິນເຊື່ອ ໄດ້ຕົກລົງກັບລູກຄ້າ ໃນຮູບແບບ ວົງເງິນສິນເຊື່ອ, ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ, ໜັງສືຮັບຮອງການຈ່າຍເງິນ ແລະ ຮູບແບບອື່ນ ຕາມການກຳນົດຂອງ ທຫລ;

4. **ຜູ້ສະໜອງສິນເຊື່ອ** ໝາຍເຖິງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ;

5. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດທົ່ວໄປ, ທະນາຄານທຸລະກິດສະເພາະ ແລະ ສາຂາ ທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ;

6. **ສະຖາບັນການເງິນອື່ນ** ໝາຍເຖິງ ສະຖາບັນການເງິນ ທີ່ຕັ້ງຢູ່ ສປປ ລາວ ຊຶ່ງປະກອບດ້ວຍ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ສະຖາບັນການເງິນທີ່ຕັ້ງຢູ່ຕ່າງປະເທດ ຊຶ່ງປະກອບດ້ວຍ ທະນາຄານ ຫຼື ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ;

7. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ສະເໜີຂໍສິນເຊື່ອ ຫຼື ໄດ້ຮັບອະນຸມັດສິນເຊື່ອຈາກກຸ່ມຜູ້ສະໜອງສິນເຊື່ອຮ່ວມ;

8. **ກຸ່ມຜູ້ສະໜອງສິນເຊື່ອຮ່ວມ** ໝາຍເຖິງ ການຮວມຕົວກັນຂອງຜູ້ສະໜອງສິນເຊື່ອ ເພື່ອເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ ບົນພື້ນຖານການຕົກລົງເຫັນດີສ້າງສັນຍາສະໜອງສິນເຊື່ອຮ່ວມ ຊຶ່ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ອາດຈະປະກອບດ້ວຍ ທະນາຄານນຳພາ, ທະນາຄານຕົວແທນດ້ານການເງິນ, ທະນາຄານຮັບຫຼັກຊັບຄໍ້າປະກັນ ຫຼື ສະມາຊິກອື່ນ;

9. **ທະນາຄານນຳພາ (Lead bank)** ໝາຍເຖິງ ທະນາຄານທຸລະກິດ ທີ່ຮັບເອກະສານຄຳຮ້ອງຂໍສິນເຊື່ອຈາກລູກຄ້າ ແລະ ອອກໜັງສືເຊີນຜູ້ສະໜອງສິນເຊື່ອອື່ນ ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ;

10. **ທະນາຄານຕົວແທນດ້ານການເງິນ (Correspondent bank)** ໝາຍເຖິງ ທະນາຄານທຸລະກິດ ທີ່ໄດ້ຮັບເລືອກໂດຍສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ເພື່ອເຮັດໜ້າທີ່ໃນການເບີກຈ່າຍເງິນໃຫ້ລູກຄ້າ, ເກັບກູ້ໜີ້, ຈັດຊັ້ນໜີ້ ແລະ ດຳເນີນການຊຳລະສະສາງ ທີ່ກ່ຽວຂ້ອງກັບການສະໜອງສິນເຊື່ອຮ່ວມໃນນາມກຸ່ມຜູ້ສະໜອງສິນເຊື່ອຮ່ວມ;

11. **ທະນາຄານຮັບຫຼັກຊັບຄໍ້າປະກັນ (Security bank)** ໝາຍເຖິງ ທະນາຄານທຸລະກິດ ທີ່ໄດ້ຮັບເລືອກໂດຍສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ເພື່ອເຮັດໜ້າທີ່ໃນການເກັບຮັກສາ ແລະ ຄຸ້ມຄອງຫຼັກຊັບຄໍ້າປະກັນ;

12. **ສະມາຊິກອື່ນ** ໝາຍເຖິງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ ເພື່ອເຮັດໜ້າທີ່ພຽງແຕ່ສະໜອງສິນເຊື່ອຮ່ວມເທົ່ານັ້ນ;

13. **ສັນຍາສິນເຊື່ອ** ໝາຍເຖິງ ການຕົກລົງ ລະຫວ່າງ ກຸ່ມຜູ້ສະໜອງສິນເຊື່ອຮ່ວມ ກັບລູກຄ້າ;

14. **ສັນຍາສະໜອງສິນເຊື່ອຮ່ວມ** ໝາຍເຖິງ ການຕົກລົງ ລະຫວ່າງ ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ເພື່ອສະໜອງສິນເຊື່ອຮ່ວມກັນໃຫ້ລູກຄ້າ;

15. **ຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ (Term Sheet)** ໝາຍເຖິງ ການຕົກລົງເບື້ອງຕົ້ນ ລະຫວ່າງ ທະນາຄານນຳພາ ກັບລູກຄ້າ ເພື່ອກຳນົດເງື່ອນໄຂການສະໜອງສິນເຊື່ອ ເປັນຕົ້ນ ວົງເງິນ, ອາຍຸສັນຍາ, ອັດຕາດອກເບ້ຍ, ຄ່າທຳນຽມ, ຫຼັກຊັບຄໍ້າປະກັນ.

**ມາດຕາ 4 ຄວາມຈຳເປັນທີ່ພາໃຫ້ມີການສະໜອງສິນເຊື່ອຮ່ວມ**

ທະນາຄານທຸລະກິດ ຕ້ອງສະໜອງສິນເຊື່ອຮ່ວມກັບຜູ້ສະໜອງສິນເຊື່ອອື່ນ ຖ້າຫາກລູກຄ້າໄດ້ສະເໜີຂໍສິນເຊື່ອເກີນຂອບເຂດການສະໜອງສິນເຊື່ອ ຂອງທະນາຄານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 5 ສະກຸນເງິນທີ່ໃຊ້ໃນການສະໜອງສິນເຊື່ອຮ່ວມ**

ສະກຸນເງິນທີ່ໃຊ້ໃນການສະໜອງສິນເຊື່ອຮ່ວມ ແມ່ນ ສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ ຕາມການສະເໜີຂອງລູກຄ້າ ແລະ ຕາມການພິຈາລະນາຂອງຜູ້ສະໜອງສິນເຊື່ອ.

ການສະໜອງສິນເຊື່ອຮ່ວມທີ່ເປັນສະກຸນເງິນຕາຕ່າງປະເທດ ຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກົມຄຸ້ມຄອງທະນາຄານທຸລະກິດ, ຜູ້ສະໜອງສິນເຊື່ອ, ລູກຄ້າ ແລະ ພາກສ່ວນອື່ນ ທີ່ເຄື່ອນໄຫວກ່ຽວຂ້ອງກັບການສະໜອງສິນເຊື່ອຮ່ວມ.

## ໝວດທີ 2
## ການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ

**ມາດຕາ 7 ຫຼັກການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ການສ້າງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ການເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ ຕ້ອງດຳເນີນການບົນພື້ນຖານຄວາມສະໝັກໃຈຂອງຜູ້ສະໜອງສິນເຊື່ອ ທີ່ຖືກເຊີນເຂົ້າຮ່ວມ ໂດຍມີການປະເມີນ ແລະ ການຕັດສິນໃຈຮ່ວມກັນ ໃນການສະໜອງສິນເຊື່ອໃຫ້ລູກຄ້າ ແລະ ມີຄວາມຮັບຜິດຊອບຮ່ວມກັນ ຈາກການສະໜອງສິນເຊື່ອດັ່ງກ່າວ;

2. ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຕ້ອງສະໜອງສິນເຊື່ອ ຕາມອັດຕາສ່ວນທີ່ໄດ້ຕົກລົງ ໃນສັນຍາສະໜອງສິນເຊື່ອຮ່ວມ, ມີສິດທີ່ຈະໄດ້ຮັບຜົນປະໂຫຍດ ເປັນຕົ້ນ ດອກເບ້ຍ, ຄ່າບໍລິການອື່ນ ພ້ອມທັງຮ່ວມກັນຮັບຜິດຊອບຄ່າໃຊ້ຈ່າຍ ແລະ ຄວາມສ່ຽງທີ່ອາດຈະເກີດຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາດັ່ງກ່າວ. ສຳລັບຜູ້ສະໜອງສິນເຊື່ອ ທີ່ຕັ້ງຢູ່ ສປປ ລາວ ຕ້ອງປະຕິບັດຂອບເຂດການສະໜອງສິນເຊື່ອ ຕາມລະບຽບການທີ່ ທຫລ ກຳນົດ;

3. ທະນາຄານນຳພາ ສາມາດເຮັດໜ້າທີ່ເປັນທັງທະນາຄານຕົວແທນດ້ານການເງິນ ຫຼື ທະນາຄານຮັບຫຼັກຊັບຄ້ຳປະກັນ ແລະ ທະນາຄານຕົວແທນດ້ານການເງິນ ສາມາດເຮັດໜ້າທີ່ເປັນທະນາຄານຮັບຫຼັກຊັບຄ້ຳປະກັນກໍໄດ້ ບົນພື້ນຖານການຕົກລົງເຫັນດີຈາກສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ. ສຳລັບສະມາຊິກອື່ນ ບໍ່ອະນຸຍາດໃຫ້ເຮັດໜ້າທີ່ເປັນທະນາຄານນຳພາ, ທະນາຄານຕົວແທນດ້ານການເງິນ ຫຼື ທະນາຄານຮັບຫຼັກຊັບຄ້ຳປະກັນ;

4. ການຈັດຕັ້ງປະຕິບັດໜ້າທີ່ ຂອງສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 8 ກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ປະກອບດ້ວຍ:

1. ທະນາຄານນຳພາ;
2. ທະນາຄານຕົວແທນດ້ານການເງິນ;
3. ທະນາຄານຮັບຫຼັກຊັບຄ້ຳປະກັນ;
4. ສະມາຊິກອື່ນ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງທະນາຄານນໍາພາ**

ທະນາຄານນໍາພາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ລິເລີ່ມດໍາເນີນການຈັດຕັ້ງການສະໜອງສິນເຊື່ອຮ່ວມ;

2. ປະເມີນຄໍາຮ້ອງຂໍສິນເຊື່ອຂອງລູກຄ້າ ຫຼື ຄວາມເປັນໄປໄດ້ຂອງໂຄງການ, ວິເຄາະຖານະການເງິນຂອງລູກຄ້າ, ກວດສອບປະຫວັດຂອງລູກຄ້າ ກ່ອນການພິຈາລະນາສະໜອງສິນເຊື່ອ, ສ້າງຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ ແລະ ນໍາສະເໜີຄວາມເປັນໄປໄດ້ໃນການເຂົ້າຮ່ວມຂອງບັນດາສະມາຊິກ;

3. ເຈລະຈາເງື່ອນໄຂສິນເຊື່ອກັບລູກຄ້າ;

4. ວ່າຈ້າງພາກສ່ວນພາຍນອກ ໃນການຮ່າງເອກະສານທາງດ້ານກົດໝາຍ, ກວດສອບ, ປະເມີນ ຫຼື ສັງລວມເອກະສານທີ່ກ່ຽວຂ້ອງ ແລະ ໃຫ້ຄໍາເຫັນຕໍ່ຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ;

5. ອອກໜັງສືເຊີນຜູ້ສະໜອງສິນເຊື່ອ ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ;

6. ຮຽກສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ເພື່ອລົງລາຍເຊັນໃນສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນ ກັບລູກຄ້າ;

7. ໃຫ້ການຊ່ວຍເຫຼືອທະນາຄານຕົວແທນດ້ານການເງິນ ໃນການບໍລິຫານສິນເຊື່ອ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງທະນາຄານຕົວແທນດ້ານການເງິນ**

ທະນາຄານຕົວແທນດ້ານການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ຊຸກຍູ້ໃຫ້ລູກຄ້າ ປະຕິບັດຕາມສັນຍາສິນເຊື່ອ ແລະ ເບີກຈ່າຍສິນເຊື່ອ ຫຼື ປະຕິບັດເງື່ອນໄຂອື່ນທີ່ກ່ຽວຂ້ອງກັບສິນເຊື່ອດັ່ງກ່າວ;

2. ສ້າງແຜນການທີ່ກ່ຽວຂ້ອງກັບດ້ານບັນຊີ, ການເປີດບັນຊີສະເພາະ ໃນການບໍລິຫານແຫຼ່ງທຶນຂອງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ແລະ ບັນທຶກການປ່ຽນແປງຂອງແຫຼ່ງທຶນດັ່ງກ່າວ;

3. ແຈ້ງສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໃຫ້ໂອນເງິນຕາມອັດຕາສ່ວນທີ່ໄດ້ຕົກລົງສະໜອງສິນເຊື່ອຮ່ວມ ເຂົ້າບັນຊີທີ່ກໍານົດໄວ້ ຕາມເວລາທີ່ໄດ້ຕົກລົງກັນ ຫຼື ເມື່ອລູກຄ້າສະເໜີຂໍເບີກຖອນເງິນ;

4. ຮັບເອົາຕົ້ນທຶນ, ດອກເບ້ຍ ແລະ ຄ່າທໍານຽມຕ່າງໆ ທີ່ລູກຄ້າໄດ້ຊໍາລະໃຫ້ ແລ້ວໂອນເຂົ້າບັນຊີຂອງສະມາຊິກທີ່ສະໜອງສິນເຊື່ອຮ່ວມທັນທີ ຕາມອັດຕາສ່ວນທີ່ກໍານົດ;

5. ບໍລິຫານຈັດການ ພາຍຫຼັງການສະໜອງສິນເຊື່ອ, ຕິດຕາມ ແລະ ກວດສອບການນໍາໃຊ້ສິນເຊື່ອ ແລະ ລາຍງານໃຫ້ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມຊາບ ຢ່າງເປັນປົກກະຕິ;

6. ຕິດຕາມຖານະການເງິນຂອງລູກຄ້າຢ່າງໃກ້ຊິດ ເມື່ອມີເຫດການສໍາຄັນ ເປັນຕົ້ນ ການຄວບກິດຈະການ, ການຈ່າຍເງິນປັນຜົນ, ການລົງທຶນ, ການໂອນຊັບສິນ, ການປັບປຸງໂຄງສ້າງສິນເຊື່ອ ທີ່ເກີດຂຶ້ນໃນໄລຍະການສະໜອງສິນເຊື່ອ ແລະ ເຫດການທີ່ອາດຈະສົ່ງຜົນກະທົບຕໍ່ຄວາມສາມາດໃນການຊໍາລະຄືນຂອງລູກຄ້າ ພ້ອມທັງລາຍງານໃຫ້ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມຊາບ ພາຍໃນເວລາ ສາມວັນ ນັບແຕ່ວັນທີ່ໄດ້ຮັບຂໍ້ມູນ;

7. ແຈ້ງໃຫ້ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມຊາບ ຢ່າງທັນເວລາ ໃນກໍລະນີລູກຄ້າລະເມີດສັນຍາ ເພື່ອດໍາເນີນການຊໍາລະ ດ້ວຍມາດຕະການທີ່ເໝາະສົມ ເປັນຕົ້ນ ການຂາຍຫຼັກຊັບຄໍ້າປະກັນ, ການເກັບກູ້ໜີ້ສິນຄືນ;

8. ຮຽກ ແລະ ຈັດກອງປະຊຸມສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ແລະ ເຮັດໜ້າທີ່ປະສານງານລະຫວ່າງສະມາຊິກດ້ວຍກັນ;

9. ຮັບຄຳປຶກສາ ແລະ ການກວດສອບ ຈາກສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ແລະ ແກ້ໄຂບັນຫາ ທີ່ຖືກມອບໝາຍໂດຍກຸ່ມຜູ້ສະໜອງສິນເຊື່ອຮ່ວມ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງທະນາຄານຮັບຫຼັກຊັບຄ້ຳປະກັນ**

ທະນາຄານຮັບຫຼັກຊັບຄ້ຳປະກັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ຄຸ້ມຄອງ ຫຼັກຊັບຄ້ຳປະກັນ;
2. ຊຳລະສະສາງຫຼັກຊັບຄ້ຳປະກັນ ໃນກໍລະນີທີ່ມີການລະເມີດສັນຍາສິນເຊື່ອ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງສະມາຊິກອື່ນ**

ສະມາຊິກອື່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງສິນເຊື່ອຕາມອັດຕາສ່ວນທີ່ຕົນຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ;
2. ເຂົ້າຮ່ວມກອງປະຊຸມຂອງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຢ່າງເປັນປົກກະຕິ;
3. ແຈ້ງບັນຫາທີ່ກ່ຽວຂ້ອງກັບລູກຄ້າ ໃຫ້ທະນາຄານຕົວແທນດ້ານການເງິນ ຢ່າງທັນເວລາ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 13 ຂັ້ນຕອນການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການສ້າງຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ;
2. ການອອກໜັງສືເຊີນ ແລະ ການຕອບຮັບ ການສະໜອງສິນເຊື່ອຮ່ວມ;
3. ການຈັດກອງປະຊຸມເພື່ອສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ;
4. ການຕົກລົງສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ.

**ມາດຕາ 14 ການສ້າງຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ**

ພາຍຫຼັງທີ່ໄດ້ຮັບຄຳຮ້ອງ ຫຼື ແບບຟອມຂໍສິນເຊື່ອຈາກລູກຄ້າ, ທະນາຄານນຳພາ ຕ້ອງດຳເນີນການກວດສອບຖານະສິນເຊື່ອ ຫຼື ໂຄງການ ຂອງລູກຄ້າ ກ່ອນການພິຈາລະນາສະໜອງສິນເຊື່ອ ພ້ອມທັງເຈລະຈາກັບລູກຄ້າກ່ຽວກັບ ການນຳໃຊ້ສິນເຊື່ອ, ວົງເງິນສິນເຊື່ອ, ອັດຕາດອກເບ້ຍ, ໄລຍະເວລາກູ້ຢືມ, ຮູບແບບການຄ້ຳປະກັນ, ເງື່ອນໄຂການເບີກຖອນສິນເຊື່ອ, ວິທີການຊຳລະຄືນສິນເຊື່ອ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃນການສ້າງຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ ແລະ ຕ້ອງເປີດເຜີຍຂໍ້ມູນທີ່ແທ້ຈິງທັງໝົດຂອງລູກຄ້າ ລວມທັງກວດສອບຂໍ້ມູນທີ່ຢູ່ໃນຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ ໃຫ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນ ເພື່ອເປັນຂໍ້ມູນໃຫ້ຜູ້ສະໜອງສິນເຊື່ອ ໃນການພິຈາລະນາເຂົ້າຮ່ວມການສະໜອງສິນເຊື່ອຮ່ວມ.

ທະນາຄານນຳພາ ສາມາດວ່າຈ້າງບໍລິສັດຈາກພາຍນອກ ເປັນຕົ້ນ ບໍລິສັດກວດສອບບັນຊີ, ບໍລິສັດປະເມີນມູນຄ່າຊັບສິນ, ບໍລິສັດທີ່ປຶກສາກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງກັບເຕັກໂນໂລຊີ ຂໍ້ມູນ ຂ່າວສານເພື່ອກວດສອບ, ປະເມີນ ຫຼື ສັງລວມເອກະສານທີ່ກ່ຽວຂ້ອງ ແລະ ໃຫ້ຄຳເຫັນຕໍ່ຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ.

ຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນ ທົ່ວໄປ ແລະ ຖານະການເງິນ ຂອງລູກຄ້າ;
2. ຂໍ້ມູນຂອງຜູ້ຄໍ້າປະກັນ (ຖ້າມີ);
3. ເງື່ອນໄຂພື້ນຖານໃນການສະເໜີຂໍສິນເຊື່ອ;
4. ວົງເງິນສິນເຊື່ອ, ອາຍຸສັນຍາ, ອັດຕາດອກເບ້ຍ, ຄ່າທຳນຽມ;
5. ປະເພດຫຼັກຊັບຄໍ້າປະກັນ;
6. ການຊຳລະຄືນສິນເຊື່ອ ແລະ ການຊຳລະຄືນກ່ອນກຳນົດ (Repayment and Prepayment);
7. ນຳສະເໜີພາບລວມຂອງໂຄງການ ລວມທັງການວິເຄາະຕະຫຼາດ ແລະ ກະແສເງິນສົດທີ່ກ່ຽວຂ້ອງ;
8. ຮູບແບບຄວາມສ່ຽງ ແລະ ມາດຕະການຮັບມື;
9. ເງື່ອນໄຂກ່ອນການເບີກຖອນສິນເຊື່ອກ່ອນກຳນົດ;
10. ຄວາມຮັບຜິດຊອບຂອງລູກຄ້າ ແລະ ຂໍ້ຫ້າມ;
11. ສາເຫດທີ່ພາໃຫ້ຜິດນັດຊຳລະໜີ້ (Event of Default);
12. ເອກະສານອະນຸມັດໂຄງການ, ເອກະສານປະເມີນສິ່ງແວດລ້ອມຂອງໂຄງການ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສິ່ງແວດລ້ອມ (ຖ້າມີ);
13. ເນື້ອໃນອື່ນ ທີ່ເຫັນວ່າຈຳເປັນ.

**ມາດຕາ 15 ການອອກໜັງສືເຊີນ ແລະ ການຕອບຮັບ ການສະໜອງສິນເຊື່ອຮ່ວມ**

ພາຍຫຼັງສຳເລັດການສ້າງຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ, ທະນາຄານນຳພາ ອອກໜັງສືເຊີນຫາຜູ້ສະໜອງສິນເຊື່ອ ທີ່ມີເງື່ອນໄຂເຂົ້າຮ່ວມກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໂດຍຄັດຕິດເອກະສານທີ່ກ່ຽວຂ້ອງເປັນຕົ້ນ ເງື່ອນໄຂໃນການສະໜອງສິນເຊື່ອຮ່ວມ, ຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ, ໜັງສືສະແດງເຈດຈຳນົງໃນການສະໜອງສິນເຊື່ອຮ່ວມ.

ຜູ້ສະໜອງສິນເຊື່ອທີ່ໄດ້ຮັບເຊີນ ຕ້ອງພິຈາລະນາກ່ຽວກັບການເຂົ້າຮ່ວມກຸ່ມຜູ້ສະໜອງສິນເຊື່ອຮ່ວມບົນພື້ນຖານຂໍ້ມູນທີ່ກຳນົດໄວ້ໃນຂໍ້ສະເໜີເພື່ອການສະໜອງສິນເຊື່ອຮ່ວມ ແລະ ຂໍ້ມູນອື່ນຂອງລູກຄ້າ. ໃນກໍລະນີເຫັນວ່າ ຂໍ້ມູນດັ່ງກ່າວ ບໍ່ພຽງພໍ, ທະນາຄານນຳພາ ຕ້ອງສະໜອງຂໍ້ມູນເພີ່ມເຕີມ ຫຼື ໃຫ້ຄຳແນະນຳທີ່ກ່ຽວຂ້ອງ ຫຼື ໃຫ້ຜູ້ສະໜອງສິນເຊື່ອກວດສອບລູກຄ້າໄດ້ໂດຍກົງ.

ພາຍຫຼັງໄດ້ຮັບການຕອບຮັບຈາກຜູ້ສະໜອງສິນເຊື່ອທີ່ໄດ້ຮັບເຊີນ, ທະນາຄານນຳພາ ຕ້ອງພິຈາລະນາວົງເງິນສິນເຊື່ອສຳລັບຜູ້ສະໜອງສິນເຊື່ອ ທີ່ຈະເຂົ້າຮ່ວມກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຢ່າງສົມເຫດສົມຜົນ ບົນພື້ນຖານການຕົກລົງຮ່ວມກັນກັບຜູ້ສະໜອງສິນເຊື່ອດັ່ງກ່າວ. ໃນກໍລະນີ ຈຳນວນວົງເງິນຂອງຜູ້ສະໜອງສິນເຊື່ອ ທີ່ຈະເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມນັ້ນ ບໍ່ພຽງພໍກັບໂຄງການ ຫຼື ຄວາມຕ້ອງການຂອງລູກຄ້າ, ທະນາຄານນຳພາ ສາມາດເຮັດໜັງສືເຊີນຜູ້ສະໜອງສິນເຊື່ອອື່ນເພີ່ມເຕີມ.

**ມາດຕາ 16 ການຈັດກອງປະຊຸມເພື່ອສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ພາຍຫຼັງໄດ້ຮັບການຕອບຮັບການເຂົ້າຮ່ວມສະໜອງສິນເຊື່ອຮ່ວມຈາກຜູ້ສະໜອງສິນເຊື່ອ ຄົບຖ້ວນ ແລະ ພຽງພໍແລ້ວ, ທະນາຄານນຳພາ ຕ້ອງພິຈາລະນາ ແລະ ຮຽກໂຮມຜູ້ສະໜອງສິນເຊື່ອດັ່ງກ່າວ ເຂົ້າຮ່ວມປະຊຸມ ເພື່ອສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ. ຜູ້ສະໜອງສິນເຊື່ອທີ່ເຂົ້າຮ່ວມກຸ່ມດັ່ງກ່າວ ຕ້ອງຕົກລົງເຫັນດີຮ່ວມກັນກ່ຽວກັບຮູບແບບການປະເມີນການສະໜອງສິນເຊື່ອຮ່ວມ ແລະ ຄ່າໃຊ້ຈ່າຍໃນການປະເມີນໂຄງການຖ້າເຫັນວ່າຈຳເປັນ ໂດຍສາມາດແຕ່ງຕັ້ງຕົວແທນ ຫຼື ວ່າຈ້າງພາກສ່ວນອື່ນ ປະເມີນໂຄງການຂອງລູກຄ້າ.

ກອງປະຊຸມສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຕ້ອງຄັດເລືອກຜູ້ທີ່ຈະເປັນທະນາຄານຕົວແທນດ້ານການເງິນ ແລະ ທະນາຄານຮັບຫຼັກຊັບຄ້ຳປະກັນ. ສຳລັບທະນາຄານທີ່ເຮັດໜ້າທີ່ເປັນທະນາຄານນຳພາໃນເບື້ອງຕົ້ນ ກ່ອນການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໃນກໍລະນີບໍ່ຕ້ອງການເຮັດໜ້າທີ່ເປັນທະນາຄານນຳພາແລ້ວ ສາມາດສະເໜີໃຫ້ກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຄັດເລືອກຜູ້ສະໜອງສິນເຊື່ອອື່ນທີ່ເຂົ້າຮ່ວມກຸ່ມດັ່ງກ່າວ ເຮັດໜ້າທີ່ເປັນທະນາຄານນຳພາແທນຕົນ.

**ມາດຕາ 17 ການຕົກລົງສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ຜູ້ສະໜອງສິນເຊື່ອທີ່ຈະເຂົ້າຮ່ວມກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຕ້ອງພິຈາລະນາ ແລະ ຕັດສິນໃຈເຂົ້າຮ່ວມຕາມອັດຕາສ່ວນທີ່ຕົນສາມາດສະໜອງສິນເຊື່ອໄດ້ ແລະ ຕົກລົງໃນກອງປະຊຸມ ເພື່ອສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ພ້ອມທັງເຊັນສັນຍາສະໜອງສິນເຊື່ອຮ່ວມ.

ພາຍຫຼັງສຳເລັດການສ້າງຕັ້ງກຸ່ມຜູ້ສະໜອງສິນເຊື່ອຮ່ວມ, ກຸ່ມຜູ້ສະໜອງສິນເຊື່ອຮ່ວມ ສາມາດດຳເນີນການເຊັນສັນຍາສິນເຊື່ອ ແລະ ສັນຍາຄ້ຳປະກັນ ກັບລູກຄ້າ.

**ມາດຕາ 18 ສັນຍາສະໜອງສິນເຊື່ອຮ່ວມ**

ສັນຍາສະໜອງສິນເຊື່ອຮ່ວມ ຕ້ອງສ້າງຂຶ້ນໂດຍສອດຄ່ອງກັບປະມວນກົດໝາຍແພ່ງ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນພື້ນຖານຂອງພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຜູ້ສະໜອງສິນເຊື່ອ, ລູກຄ້າ, ຜູ້ຄ້ຳປະກັນ;
2. ຄຳນິຍາມ ແລະ ການອະທິບາຍຄຳສັບ;
3. ລາຍລະອຽດຂອງໂຄງການ;
4. ຂໍ້ກຳນົດກ່ຽວກັບສິນເຊື່ອ ເປັນຕົ້ນ ວົງເງິນສິນເຊື່ອ, ອັດຕາດອກເບ້ຍ, ສະກຸນເງິນ, ວັນຄົບກຳນົດສັນຍາ, ວິທີການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍ ລວມທັງຄ່າໃຊ້ຈ່າຍອື່ນ ທີ່ເກີດຂຶ້ນໃນການສະໜອງສິນເຊື່ອຮ່ວມ;
5. ອັດຕາສ່ວນ ຫຼື ວົງເງິນ ການສະໜອງສິນເຊື່ອຮ່ວມ ແລະ ໄລຍະເວລາການໂອນເງິນ ຕາມທີ່ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມໄດ້ຕົກລົງກັນ;
6. ເງື່ອນໄຂໃນການເບີກຖອນ ແລະ ຮຽກເກັບເງິນ;
7. ພາລະຜູກພັນທາງການເງິນ;
8. ພາລະຜູກພັນທີ່ບໍ່ແມ່ນທາງການເງິນ ລວມທັງຂໍ້ຈຳກັດໃນການຂາຍຊັບສິນ, ການປ່ຽນແປງທຸລະກິດ, ການເປີດເຜີຍຂໍ້ມູນ ແລະ ພາລະຜູກພັນທີ່ບໍ່ແມ່ນທາງການເງິນອື່ນ;
9. ປະເພດຂອງຫຼັກຊັບຄ້ຳປະກັນ, ວິທີການຄຸ້ມຄອງ ແລະ ການໃຊ້ແທນໜີ້ສິນ ໃນກໍລະນີທີ່ລູກຄ້າບໍ່ສາມາດໃຊ້ແທນໜີ້ສິນໄດ້;
10. ສິດ ແລະ ໜ້າທີ່ ຂອງທະນາຄານນຳພາ, ທະນາຄານຕົວແທນດ້ານການເງິນ, ທະນາຄານຮັບຫຼັກຊັບຄ້ຳປະກັນ ແລະ ສະມາຊິກອື່ນ ທີ່ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ;
11. ວິທີຮັບມືກັບຄວາມສ່ຽງທີ່ຈະເກີດຂຶ້ນຈາກການສະໜອງສິນເຊື່ອ, ວິທີແກ້ໄຂຂໍ້ຂັດແຍ່ງລະຫວ່າງສະມາຊິກທີ່ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ;
12. ວິທີການກວດສອບກ່ອນ ແລະ ຫຼັງການສະໜອງສິນເຊື່ອຮ່ວມ, ການໃຫ້ຂໍ້ມູນສຳລັບການສະໜອງສິນເຊື່ອຮ່ວມ;

**ມາດຕາ 19 ສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນ**

ສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນ ຕ້ອງສ້າງຂຶ້ນໂດຍສອດຄ່ອງກັບປະມວນກົດໝາຍແພ່ງ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນ ຕ້ອງໄດ້ຮັບການເຊັນຢັ້ງຢືນໂດຍສະມາຊິກທັງໝົດ ທີ່ເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມ ຫຼື ອາດມອບສິດຢ່າງເປັນລາຍລັກອັກສອນ ໃຫ້ສະມາຊິກໃດໜຶ່ງຕາງໜ້າກຸ່ມຜູ້ສະໜອງສິນເຊື່ອຮ່ວມ ເຊັນສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນ ກັບ ລູກຄ້າ.

## ໝວດທີ 3
## ການຂໍອະນຸຍາດສະໜອງສິນເຊື່ອຮ່ວມ

**ມາດຕາ 20 ການຂໍອະນຸຍາດສະໜອງສິນເຊື່ອຮ່ວມ**

ສະຖາບັນການເງິນ ທີ່ຕັ້ງຢູ່ຕ່າງປະເທດ ທີ່ຕ້ອງການເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກກົມຄຸ້ມຄອງທະນາຄານທຸລະກິດ ກ່ອນການເຊັນສັນຍາສະໜອງສິນເຊື່ອຮ່ວມ ໂດຍທະນາຄານນໍາພາ ເປັນຜູ້ຕາງໜ້າສະເໜີຂໍອະນຸຍາດ ແລະ ປະກອບເອກະສານ ຕາມການກໍານົດຂອງກົມຄຸ້ມຄອງທະນາຄານທຸລະກິດ. ພ້ອມນີ້, ລູກຄ້າບໍ່ຈໍາເປັນຂໍອະນຸຍາດໃນການກູ້ຢືມເງິນຈາກຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ທີ່ຕ້ອງການເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດຈາກກົມຄຸ້ມຄອງທະນາຄານທຸລະກິດ ກ່ອນການຕອບຮັບການເຂົ້າຮ່ວມສະໜອງສິນເຊື່ອຮ່ວມ ໂດຍປະກອບເອກະສານຄືກັນກັບການໃຫ້ກູ້ຢືມເງິນແກ່ຕ່າງປະເທດ ຕາມລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີມີຫຼາຍທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ຕ້ອງການເຂົ້າຮ່ວມໃນການສະໜອງສິນເຊື່ອຮ່ວມກຸ່ມດຽວກັນ ສາມາດຂໍອະນຸຍາດແບບຮ່ວມກັນ ຫຼື ແຍກກັນກໍໄດ້.

ສໍາລັບການສະໜອງສິນເຊື່ອຮ່ວມ ລະຫວ່າງ ທະນາຄານທຸລະກິດດ້ວຍກັນ ຫຼື ທະນາຄານທຸລະກິດກັບສະຖາບັນການເງິນອື່ນ ທີ່ຕັ້ງຢູ່ ສປປ ລາວ ບໍ່ຈໍາເປັນຕ້ອງຂໍອະນຸຍາດຈາກກົມຄຸ້ມຄອງທະນາຄານທຸລະກິດ ແຕ່ໃຫ້ທະນາຄານນໍາພາ ເປັນຜູ້ຕາງໜ້າລາຍງານໃຫ້ກົມຄຸ້ມຄອງທະນາຄານທຸລະກິດຊາບ ຢ່າງເປັນລາຍລັກອັກສອນ ພາຍຫຼັງສໍາເລັດການເຊັນສັນຍາສະໜອງສິນເຊື່ອຮ່ວມ, ສັນຍາສິນເຊື່ອ ແລະ ສັນຍາຄໍ້າປະກັນກັບລູກຄ້າ.

**ມາດຕາ 21 ການພິຈາລະນາການຂໍອະນຸຍາດສະໜອງສິນເຊື່ອຮ່ວມ**

ກົມຄຸ້ມຄອງທະນາຄານທຸລະກິດ ພິຈາລະນາອອກໜັງສືແຈ້ງຕອບການຂໍອະນຸຍາດການເຂົ້າຮ່ວມການສະໜອງສິນເຊື່ອຮ່ວມ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນ. ໃນກໍລະນີປະຕິເສດ ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

## ໝວດທີ 4
## ການບໍລິຫານການສະໜອງສິນເຊື່ອຮ່ວມ

**ມາດຕາ 22 ການບໍລິຫານການສະໜອງສິນເຊື່ອຮ່ວມ**

ທະນາຄານຕົວແທນດ້ານການເງິນ ຕ້ອງບໍລິຫານການສະໜອງສິນເຊື່ອຮ່ວມປະຈໍາວັນ ຕາມໄລຍະເວລາຂອງສິນເຊື່ອນັ້ນ. ໃນນັ້ນ, ທະນາຄານນໍາພາ ຕ້ອງໃຫ້ການຊ່ວຍເຫຼືອທະນາຄານຕົວແທນດ້ານການເງິນ

ໃນການຕິດຕາມຄວາມຄືບໜ້າຂອງໂຄງການ ເພື່ອກວດກາບັນຫາທີ່ອາດຈະເກີດຂຶ້ນໄດ້ທັນເວລາ ແລະ ແຈ້ງໃຫ້ສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມຊາບ ຢ່າງເປັນລາຍລັກອັກສອນ.

**ມາດຕາ 23 ກອງປະຊຸມຂອງກຸ່ມຜູ້ສະໜອງສິນເຊື່ອຮ່ວມ**

ກອງປະຊຸມຂອງກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຈັດຂຶ້ນເພື່ອປຶກສາຫາລືບັນຫາສຳຄັນ ຊຶ່ງບັນຫາທີ່ຈະນຳມາປຶກສາຫາລືໃນກອງປະຊຸມດັ່ງກ່າວ ປະກອບດ້ວຍ ການແກ້ໄຂຂໍ້ກຳນົດຕ່າງໆໃນສັນຍາສິນເຊື່ອ, ການປັບວົງເງິນສິນເຊື່ອ, ການປ່ຽນແປງຫຼັກຊັບຄ້ຳປະກັນ ຫຼື ອັດຕາດອກເບ້ຍ, ການຍົກເລີກສິນເຊື່ອ, ການແຈ້ງການຄວບກິດຈະການ ຫຼື ທຸລະກຳກ່ຽວຂ້ອງທີ່ສຳຄັນ, ການພິຈາລະນາການລະເມີດສັນຍາ ຫຼື ຜິດນັດຊຳລະໜີ້ຂອງລູກຄ້າ, ການປັບປຸງໂຄງສ້າງສິນເຊື່ອຄືນໃໝ່, ການປ່ຽນແປງທີ່ກ່ຽວຂ້ອງກັບສະມາຊິກໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ແລະ ບັນຫາອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສະໜອງສິນເຊື່ອຮ່ວມ.

**ມາດຕາ 24 ການຊຳລະຄືນສິນເຊື່ອ**

ທະນາຄານຕົວແທນດ້ານການເງິນ ຕ້ອງຕິດຕາມ, ຮຽກເກັບ ແລະ ຮັບເອົາການຊຳລະເງິນ ທັງຕົ້ນທຶນ ແລະດອກເບ້ຍ ຈາກລູກຄ້າ ຄືນໃຫ້ກຸ່ມຜູ້ສະໜອງສິນເຊື່ອຮ່ວມ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາສິນເຊື່ອ.

ທະນາຄານຕົວແທນດ້ານການເງິນ ສາມາດປັບໃໝລູກຄ້າ ໃນກໍລະນີລູກຄ້າມີຈຸດປະສົງຊຳລະກ່ອນກຳນົດ ຕາມອັດຕາປັບໃໝທີ່ໄດ້ກຳນົດໄວ້ໃນສັນຍາສິນເຊື່ອ.

## ໝວດທີ 5
## ການບັນຊີ, ການລາຍງານ, ການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ

**ມາດຕາ 25 ການບັນຊີ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ທີ່ຕັ້ງຢູ່ ສປປ ລາວ ຕ້ອງບັນທຶກບັນຊີກ່ຽວກັບການສະໜອງສິນເຊື່ອຮ່ວມ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 26 ການລາຍງານ**

ທະນາຄານທຸລະກິດ ທີ່ສະໜອງສິນເຊື່ອຮ່ວມ ຢູ່ ສປປ ລາວ ແລະ/ຫຼື ຢູ່ຕ່າງປະເທດ ຕ້ອງລາຍງານການສະໜອງສິນເຊື່ອຮ່ວມຂອງຕົນ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ຕາມແບບພິມທີ່ກຳນົດ.

ສະຖາບັນການເງິນອື່ນ ທີ່ຕັ້ງຢູ່ ສປປ ລາວ ທີ່ສະໜອງສິນເຊື່ອຮ່ວມ ຢູ່ ສປປ ລາວ ຕ້ອງລາຍງານການສະໜອງສິນເຊື່ອຮ່ວມຂອງຕົນ ໃຫ້ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມແບບພິມທີ່ກຳນົດ.

**ມາດຕາ 27 ການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ທີ່ຕັ້ງຢູ່ ສປປ ລາວ ຕ້ອງຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ ຕາມວົງເງິນສິນເຊື່ອ ຫຼື ຍອດເຫຼືອສິນເຊື່ອ ທີ່ຕົນໄດ້ອະນຸມັດໃນກຸ່ມຜູ້ສະໜອງສິນເຊື່ອຮ່ວມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການໃນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ. ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີໜ້າທີ່ຕິດຕາມ ກວດກາ ການສະໜອງສິນເຊື່ອຮ່ວມ ຂອງສະຖາບັນການເງິນອື່ນ ທີ່ຕັ້ງຢູ່ ສປປ ລາວ.

ຜູ້ສະໜອງສິນເຊື່ອ, ລູກຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ວ່າການ**

**ບຸນສ່ຳ ວິລະຈິດ**